# ອາໂມດ

| | |
|---|---|
| ໃຈຄວາມສຳຄັນ | ຈົ່ງຕຽມຕົວເພື່ອຕ້ອນຮັບພຣະເຈົ້າຂອງເຈົ້າ |
| ຂໍ້ຄວາມສຳຄັນ | ມີ:໒ |
| ຈຳນວນບົດ | ໙ ບົດ |
| ເຣື່ອງທີ່ເກີດຂຶ້ນແຕ່ປີ | ໗໐໐ ຈົນເຖິງປີ ໗໕໐ ກ່ອນ ຄ.ສ. |
| ປະຈຳຢູ່ທີ່ | ພາກເໜືອ |
| ຈັກກະພັດທີ່ມີອຳນາດ | ອາຊີຣີ |
| ອາໂມດແປວ່າ | ຜູ້ທີ່ພຣະເຈົ້າແບກໄປ |
| ຜູ້ທຳນວາຍຄົນທີ | ໔ |

## ໑. ວ່າດ້ວຍຄາວຂອງອາໂມດ

ອາໂມດ ໄດ້ທຳນວາຍ ໃນຄາວ ເຢໂຣໂບອາມ ທີສອງ ເປັນກະສັດຂອງຣາຊອານາຈັກຊາມາຣີ ກະສັດອົງນີ້ໄດ້ນຳພວກອິສຣາເອັນໄປໃນທາງບາບ ຄືໄດ້ພາພວກເຂົານົບຮູບເຄົາຣົບ ໄດ້ປົກຄອງດ້ວຍຄວາມບໍ່ຊອບທັມເຖິງພວກເຂົາຈະໄດ້ບູຊາພຣະເຈົ້າ ແຕ່ພຣະເຈົ້າກໍຊົງຮັບເອົາບໍ່ໄດ້ເພາະພວກເຂົາເຮັດໄປດ້ວຍຄວາມບໍ່ສັດຊື່ ພວກເຂົາໄດ້ຊຸມນຸມກັນຮ້ອງເພງໃນພຣະນາມ ຂອງພຣະເຢໂຮວາ ແຕ່ພຣະເຈົ້າ ກໍບໍ່ໄດ້ ຊົງຟັງພວກເຂົາ (໕:໒໑–໒໔) ດ້ວຍເຫດນີ້ເມື່ອພວກອິສຣາເອັນຖືເທດສການດ້ວຍ

ໃຈບໍ່ສັດຊື່ຢູ່ເມືອງເບດເອັນ  ພຣະເຈົ້າຈຶ່ງຈິງໃຊ້ອາໂມດໄປປ່າວປະກາດຍັງໂທດຂອງພວກເຂົາ

## ໒. ວ່າດ້ວຍຊີວິດຂອງທ່ານອາໂມດ

ໃນບົດທີ ໗:໑໔  ບອກວ່າອາໂມດບໍ່ໄດ້ເປັນຝ່າຍຂອງພວກທຳ-ນວາຍເພິ່ນເປັນຄົນລ້ຽງແກະ  ແລະຢູ່ໃນບ້ານເທໂກອາຊຶ່ງເປັນບ້ານຢູ່ໃຕ້ເບດເລເຫມໄປປະມານສິບຫລັກ  ຕໍ່ມາພຣະເຈົ້າຈຶ່ງເອີ້ນເອົາເພິ່ນເປັນຜູ້ທຳນວາຍເໝືອນດັ່ງຈິ່ງເອີ້ນເອົາໂມເຊນັ້ນ  ໃນພັງສືນີ້ຍັງບອກວ່າໃນຄາວກ່ອນອາໂມດເປັນຄົນທຳການໜັກຢູ່ໃນກາງປ່າ  ເຂົາເຄີຍຕໍ່ສູ້ກັບສັດປ່າ ແລະ ເຄີຍຄິດຕຶກຕອງເຖິງກິຈການ ຂອງ ພຣະເຈົ້າ ໃນ ທັມະຊາດ ນັ້ນດ້ວຍ (໑:໒; ໒:໑໓; ໓:໔ ແລະ ໕, ໔:໗; ໕:໘; ໖:໑໒; ໗:໑; ໘:໑; ໙:໖)

## ໓. ວ່າດ້ວຍເນື້ອຄວາມ

### ໑. ຜູ້ມີບາບຈະຖືກໂທດ

- ກ. ທຸກປະເທດທີ່ຢູ່ໃກ້ປະເທດອິສຣາເອັນຈະຖືກໂທດ (ບົດ ໑ ແລະ ໒)
- ຂ. ໂທດຢ່າງໜັກຈະຖືກພວກຂອງພຣະເຈົ້າ (໓:໒)

### ໒. ບາບຂອງປະເທດອິສຣາເອັນ

- ກ. ເຂົາຖືສາສນາແຕ່ປາກ (໕:໒໑)
  ເຂົານົບຮູບພຣະ (໕:໒໖)

ຂ. ເຂົາກຽດຊັງຄວາມດີ, ຄວາມສັດຊື່, ຄວາມຈິງ (໕:໑໐,໑໔)

ຄ. ເຂົາຂົ່ມເຫັງຄົນທຸກຄົນຍາກ (໒:໖,໗; ໔:໑)

ງ. ເຂົາຫາຜູ້ຕັດສິນບໍ່ຍຸຕິທັມ (໕:໑໒; ໖:໑໒)

ຈ. ເຂົາຄ້າຂາຍບໍ່ສັດຊື່ (໘:໕)

໓. ພຣະເຈົ້າຊົງເອີ້ນໃຫ້ປ່ຽນໃຈ

ພຣະເຈົ້າບໍ່ຢາກໃຫ້ຜູ້ໃດຖືກໂທດ ສມັ້ນພຣະເຈົ້າຈຶ່ງຕັກເຕືອນພວກເຂົາໃຫ້ກັບມາຫາພຣະເຈົ້າ (໕:໔)

ພຣະເຈົ້າ ຊົງເຮັດໃຫ້ ມີການອຶດເຂົ້າ ເພື່ອຢາກໃຫ້ ພວກເຂົາກັບໃຈເສັຍໃໝ່ (໔:໖–໑໒)

໔. ສິ່ງທີ່ຈະເກີດຂຶ້ນໃນອານາຄົດ

ກ. ວັນແຫ່ງພຣະເຢໂຮວາ (໕:໑໘) ຄືວ່າວັນນີ້ຈະເປັນວັນລົງໂທດ

ຂ. ທຸກປະເທດຈະຖືກເນຣະເທດ (໖:໗; ໗:໙; ໙:໔; ໕:໒໗)

ຄ. ພຣະເຈົ້າຍັງຈະທ້ອນໂຮມເອົາພວກເຂົາມາອີກ (໙:໑໔–໑໕)

໔. ການແບ່ງເປັນພາກ

ພາກທີ ໑ ຄໍາທໍານວາຍເຖິງພວກຄົນໃນ ໘ ປະເທດ ບົດ ໑–໒

## ພາກທີ ໒ ຄຳທຳນວາຍເຖິງພວກອິສຣາເອັນ ບົດ ໓-໖

ກ. ພຣະເຈົ້າຊົງເຕືອນພວກອິສຣາເອັນ ບົດ ໓

ຂ. ພວກອິສຣາເອັນບໍ່ຍອມຟັງພຣະເຈົ້າ ບົດ ໔

ຄ. ພຣະເຈົ້າຊັກຊວນໃຫ້ຊອກຫາພຣະອົງ ບົດ ໕:໑-໑໕

ງ. ໂທດທີ່ຈະມີມາ ບົດ ໕:໑໖-໖:໑໔

## ພາກທີ ໓ ນິມິດຕ່າງໆ ບົດ ໗-໙:໑໐

ກ. ນິມິດກ່ຽວກັບໂທດ ບົດ ໗:໑-໙

ຂ. ເຣື່ອງເຂົາຫ້າມອາໂມດບໍ່ໃຫ້ສັ່ງສອນອີກ ບົດ ໗:໑໐-໑໗

ຄ. ນິມິດກ່ຽວກັບໂທດ ບົດ ໘:໙-໑໐

## ພາກທີ ໔ ພຣະເຈົ້າຈະໂຮມພວກອິສຣາເອັນອີກ ບົດ ໙:໑໑-໑໕